SDCS San Diego City Schools
Fact Sheet
ລະດູໃບໄມ້ລົ່ນ 2005

# ໂຄງການລວມຄວາມຮູ້ຊີວິດຕົວຈິງ

ໂຄງການລວມຄວາມຮູ້ຊີວິດຕົວຈິງ (ILS) ຂອງພະແນກສຶກສາພິເສດ ເຂດສຶກສາແຊນດິເອໂກແມ່ນໂຄງການສຳຫລັບນັກຮຽນອາຍຸຫ້າປີເຖິງ 22 ປີ ທີ່ພິການຕ່າງໆ. ໂຄງການນີ້ໄດ້ປະຕິບັດຕາມຫລັກສູດຂັ້ນມາດຖານສຳລອງ, ເພື່ອຮັບໃບຢັ້ງຢືນການຈົບ ແທນທີ່ ຮັບໃບປະກາສນີຍະບັດ(diploma). ມີທີ່ຕັ້ງຢູ່ໃນໂຮງຮຽນຕ່າງໆໃນເຂດສູນການສຶກສາ, ໂຄງການນີ້ຮັບບໍລິການນັກຮຽນຫລາຍກວ່າ 1,000 ຄົນ.

ໂຄງການ ILS ກະກຽມນັກຮຽນ ທີ່ອາສັຍຢູ່ໃນເຂດຄຸ້ມໂຮງຮຽນ ໂດຍອີງຕາມຄວາມເຊື່ອຖືຂອງນັກຮຽນແຕ່ລະຄົນ, ໂດຍບໍ່ຈຳແນກຄວາມພິການ, ປະກັນຄວາມເທົ່າທຽມກັນດ້ານການເລືອກຮຽນ ແລະ ໃຫ້ການຊ່ວຍເຫລືອນັກຮຽນທຸກໆຄົນໃນກຸ່ມທີ່ມີອາຍຸເທົ່າກັນ.
ຈຸດສຳຄັນເຫລົ່ານີ້ມີ:

- ໃຫ້ນັກຮຽນທຸກໆຄົນໄດ້ຮັບຜົນປະໂຍດຈາກການສຶກສາທີ່ມີຄຸນພາບດີ
- ນັກຮຽນທຸກໆຄົນໄດ້ຮັບຜົນປະໂຍດຈາກການດຳລົງຊີວິດຕົວຈິງ, ທັກສະ ແລະ ການຮຽນຮ່ວມກັນຕລອດເຖິງການດຳເນີນການຮຽນຂັ້ນທຳມະດາທົ່ວໄປ; ແລະ
- ການຍານຫລາຍໆເຜົ່າຊົນນັ້ນ ສັງຄົມຂອງພວກເຮົາຈະມີຄວາມເຂັ້ມແຂງດີຂຶ້ນ

ພວກນັກຮຽນທີ່ມີເງື່ອນໄຂເຂົ້າໂຄງການ ILS ນີ້ຕ້ອງແມ່ນພິການແຕ່ຂັ້ນເບົາບາງຫາຂັ້ນໃດຂັ້ນນຶ່ງກ່ຽວກັບຄວາມຊັກຊ້າດ້ານມັນສມອງ, ມີຄວາມສລາດ (ໄອຄິວ–IQ 69 ຫລື ຕ່ຳກວ່ານັ້ນ) ແລະແຈ້ງວ່າພິການອັນໃດອັນນຶ່ງ ຕາມກົດຫມາຍການສຶກສາພິການ (IDEA). ສິ່ງເຫລົ່ານີ້ຕ້ອງລວມທັງ:
• ຄວາມສາມາດ–ຂັ້ນສຳລອງສເລັ່ຍທົ່ວໄປ ຮວມກັບການປະພຶດທີ່ອ່ອນແອ ແລະ ຮວມທັງຄວາມກ້າວຫນ້າໃນລະຍະມີການຈເລີນເຕີບໂຕ ທີ່ເປັນປະໂຫຍດ່ການສຶກສາຮ່ຳຮຽນ.

ແຜນການຮຽນສ່ວນບຸກຄົນ (IEP) ຂອງນັກຮຽນແຕ່ລະຄົນ ເນັ້ນຫນັກໃສ່ເປົ້າຫມາຍ ແລະ ຈຸດປະສົງສ່ວນບຸກຄົນ ເພື່ອໃຫ້ຄວາມສາມາດຮຽນຫລັກສູດແກນສານຂອງສູນການສຶກສາ ແລະ ໃຫ້ຖືກຕ້ອງເຫມາະສົມກັບຄວາມຕ້ອງການຂອງພວກນັກຮຽນ. ແຜນສຶກສາສ່ວນບຸກຄົນຍັງໄດ້ແຈ້ງເຖິງຄວາມຕ້ອງການທີ່ກ່ຽວຂ້ອງກັບການບໍລິການຊ່ວຍເຫລືອຢ່າງໃດຢ່າງນຶ່ງ ຫລື ອີກຫລາຍໆຢ່າງ.

## ຂໍ້ສລຸບ

- ❖ ບໍລິການຊ່ວຍເຫລືອພວກນັກຮຽນແຕ່ອາຍຸ 5 ເຖິງ 22 ປີ, ຜູ້ທີ່ເປັນພິການ.
- ❖ ໂຄງການລວມຂອງຊີວິດຕົວຈິງ (ILS) ປະຕິບັດຕາມພື້ນຖານໃຊ້ຫລັກສູດຂັ້ນມາດຖານສຳລອງ, ເພື່ອຮຽນເອົາໃບຢັ້ງຢືນການຈົບແທນທີ່ຈະແມ່ນໃບປະກາດສນີຍະບັດ (diploma).
- ❖ ເປັນທັງບທາງເພື່ອໄປຫາສະພາບແວດລ້ອມຂອງການສຶກສາທົ່ວໄປ.
- ❖ ເປັນທັງບທາງໄປສູ່ຫາຫລັກສູດແກ່ນສານ ແລະ ການສິດສອນທັງທາງເລືອກ, ໂດຍມີການດັດແປງ ແລະ ນຳມາໃຊ້, ການໃຊ້ເທັກໂນໂລຈີຊ່ອຍ, ແລະ ໃຊ້ວິທີການຕິດຕໍ່ປາກເວົ້າ ເພື່ອໃຫ້ເຫມາະສົມກັບຄວາມຕ້ອງການແຕ່ລະສ່ວນບຸກຄົນ, ອີງຕາມທິສດີໃນການຄົ້ນຄວ້າປັດຈຸບັນ.
- ❖ ຂອບເຂດຂອງການຊ່ວຍເຫລືອບໍລິການ (ຕົວຢ່າງ APE, SLP, ແລະ OT/PY) ນັ້ນມີໄວ້ໃຫ້ພວກນັກຮຽນທີ່ມີເງື່ອນໄຂໄດ້ຮັບ, ຕາມເງື່ອນໄຂທີ່ວາງໄວ້ຂອງນັກຊ່ຽວຊານດ້ານນີ້ ແລະ ຕາມຄະນະ IEP.

**ການສັບຊ້ອນ:** ການສັບຊ້ອນຢູ່ໃນໂຄງການ ILS ແມ່ນສັບຊ້ອນຫລັງຈາກ ຄະນະ IEP ວາງເງື່ອນໄຂແລ້ວ. ໂຄງການ ILS ສືບຕໍ່ໃຫ້ການຊ່ວຍເຫລືອກັບໂຮງຮຽນ ແລະ ໂຮງຮຽນໃກ້ຄຽງ, ໂຮງຮຽນທີ່ເລືອກເອົາ ຫລື ບ່ອນອື່ນໆທີ່ຈັດໄວ້ຖືກຕ້ອງເຫມາະສົມນັ້ນ.

- ຫ້ອງຮຽນການສຶກສາທົ່ວໄປຂອງພວກນັກຮຽນໃນກຸ່ມອາຍຸເທົ່າກັນ ໃນການຮຽນເຕັມວັນ ຫລື ບໍ່ເຕັມວັນ; ແລະ
- ຫ້ອງຮຽນພິເສດສຳຫລັບສິດສອນກຸ່ມນ້ອຍໆ.

ໂຄງການໃຫ້ການບໍລິການ:

- ໃຫ້ທັງບທາງເພື່ອເຂົ້າຮຽນຂັ້ນສຶກສາທົ່ວໄປຕ່າງໆ
- ໃຫ້ທັງບທາງເພື່ອເລືອກການຮຽນ ແລະ ຫລັກສູດແກ່ນສານຂອງສູນການສຶກສາ, ການຮຽນທີ່ຖືກດັດແປງ ແລະ ລົງມະຕິຮັບເອົາມາໃຊ້, ການໃຊ້ເທັກໂນໂລຈີຊ່ອຍ, ແລະ ການໃຊ້ວິທີການຕິດຕໍ່ປາກເວົ້າທີ່ຈຳເປັນເພື່ອໃຫ້ເຫມາະສົມກັບຄວາມຕ້ອງການຂອງສ່ວນບຸກຄົນ, ອີງຕາມທິສດີຂອງການຄົ້ນຄວ້າປັດຈຸບັນ.
- ປະສານງານກັບລະຫວ່າງພະນັກງານການສຶກສາທົ່ວໄປ ແລະ ການສຶກສາພິເສດ.
- ຂັ້ນລະດັບ ຂອງການບໍລິການທີ່ຈັດໃຫ້ມີ (ເຊັ່ນ APE, SLP, ແລະ OT/OP) ໄວ້ໃຫ້ພວກນັກຮຽນທີ່ມີເງື່ອນໄຂເຫມາະສົມ, ຕາມການກຳນົດຂໍ້ທົດສອບຂອງເຂດທີ່ຂ້ອງໃຈ ແລະ ຂອງຄະນະ IEP.
- ໃຫ້ການປຶກສາແນະນຳໃນກຸ່ມດຳເນີນງານ ເພື່ອປັບປຸງຍຸທວິທີການສອນ ແລະ ເພື່ອຮຽນການວາງແຜນຊ່ອຍເຫລືອດ້ານການປະພຶດ.
- ຈັດໃຫ້ມີໂຄງການຮຽນເພີ່ມຕ່າງໆສຳຫລັບພວກນັກຮຽນທີ່ຖືກກຳນົດເງື່ອນໄຂຈາກ ຂອງຄະນະ IEP ໄວ້ນັ້ນ.
- ປະຕິບັດການຊຶດສອບ ແລະ ການຮຽນອັນດີເລີດໃນທຸກໆວິຊາການ ໂດຍອີງຕາມທິສດີ ແລະ ປຣາຊຍາຂອງການຄົ້ນຄວ້າປັດຈຸບັນ.

*ອະພິນັນທະນາການດຳພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Integrated Life Skills Program: (858) 693-5500**
**Media inquires: (619) 725-5578**

**www.sandi.net**
***revised 10/04/05***

ບໍລິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນການສຶກສາແຊນດິເອໂກເປັນສູນການໃຫຍ່ທີ່ສຸດທີສອງໃນຣັຖຄາລີຟເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແຫນ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.) ສູນການສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນ ໂດຍຜ່ານການເນັ້ນຫນັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນຊັ້ນຮຽນກຽມອະນຸບານເຖິງປີທີ 12. ສູນການສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ, ແລະ ສົ່ງເສີມສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສມັຍ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ.

---

ພາລະຫນ້າທີ່ຂອງໂຮງຮຽນສູນການສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.